ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ
ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ: 2164 /ປທສ

ນະຄອນຫຼວງວຽງຈັນ, ວັນທີ: 15 JUL 2016

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງສູນອິນເຕີເນັດແຫ່ງຊາດ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.
- ອີງຕາມ ການຄົ້ນຄວ້າເຫັນດີເປັນເອກະພາບຂອງຄະນະນຳ ກະຊວງ ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ.

## ລັດຖະມົນຕີ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບ ແຜນວິທີເຮັດວຽກຂອງ ສູນອິນເຕີເນັດ ແຫ່ງຊາດ ເພື່ອເປັນບ່ອນອີງທາງດ້ານນິຕິກຳ ໃນການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ສູນອິນເຕີເນັດ ແຫ່ງຊາດ.

**ມາດຕາ 2: ທີ່ຕັ້ງ ແລະ ພາລະບົດບາດ**

ສູນອິນເຕີເນັດ ແຫ່ງຊາດ ຂຽນຫຍໍ້ວ່າ "ສອຊ" (ເປັນພາສາ ສາກົນ Lao National Internet Center ຂຽນຫຍໍ້ວ່າ "LANIC"), ສອຊ ເປັນຫົວໜ່ວຍວິຊາການໜຶ່ງ ມີຖານະທຽບເທົ່າກົມ ທີ່ສັງກັດໃນໂຄງປະກອບການຈັດຕັ້ງຂອງ ກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ມີພາລະບົດບາດ ຄຸ້ມຄອງລວມສູນການສື່ສານ ຂອງລະບົບເຄືອຂ່າຍໂທລະຄົມມະນາຄົມ ແລະ ອິນເຕີເນັດ ທັງພາຍໃນ ແລະ ຕ່າງປະເທດ, ເປັນຈຸດເຊື່ອມຕໍ່ຂອງລະບົບຄຸ້ມຄອງໂທລະຄົມມະນາຄົມ ແລະ ອິນເຕີເນັດ, ຄຸ້ມຄອງ ລະຫັດຊື່ອິນເຕີເນັດຊັ້ນສູງສຸດແຫ່ງຊາດ ດອດລາ (.LA), ພ້ອມທັງເປັນສູນຂໍ້ມູນແຫ່ງຊາດ(National Data Center) ເພື່ອສະໜອງການບໍລິການໃຫ້ແກ່ພາກລັດ ແລະສັງຄົມ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 3: ໜ້າທີ່

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ແນວທາງນະໂຍບາຍ, ມະຕິ, ຄຳສັ່ງ, ບົດແນະນຳ ແລະ ນິຕິກຳອື່ນໆຂອງພັກ-ລັດຖະບານ, ກໍຄືກະຊວງ ທີ່ພົວພັນເຖິງວຽກງານ ສອຊ ໃນຂອບເຂດຄວາມຮັບຜິດ ຊອບຂອງຕົນເພື່ອສ້າງເປັນແຜນການ, ແຜນງານ, ໂຄງການລະອຽດພ້ອມທັງຈັດຕັ້ງປະຕິບັດ, ຕິດຕາມ ແລະ ສະຫຼຸບຖອດຖອນບົດຮຽນ.
2. ປະຕິບັດແຜນຍຸດທະສາດ ແລະ ແຜນພັດທະນາ ດ້ານໄອຊີທີ ແຫ່ງຊາດ ທີ່ກ່ຽວຂ້ອງ.
3. ສ້າງລະບຽບການ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານຂອງ ສອຊ.
4. ສ້າງແຜນການ, ແຜນງົບປະມານ ແລະ ແຜນລາຍຮັບ-ລາຍຈ່າຍວິຊາການເພື່ອຮັບປະກັນການບໍລິຫານວິຊາການຂອງ ສອຊ.
5. ຄຸ້ມຄອງລະບົບເຕັກນິກສຳລັບການລວມສູນການສື່ສານຂອງລະບົບໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອຮັບປະກັນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.
6. ຄຸ້ມຄອງເລກໝາຍອິນເຕີເນັດ, ລະຫັດ ຊື່ອິນເຕີເນັດ ແຫ່ງຊາດ ດອດລາ (.LA) ແລະ ລະຫັດຊື່ອິນເຕີເນັດ ອື່ນທີ່ນຳໃຊ້ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ສປປລາວ.
7. ຄຸ້ມຄອງ ແລະ ສະໜອງການໃຫ້ບໍລິການຝາກອຸປະກອນໄອທີ ແລະ ຂໍ້ມູນຂ່າວສານ ຂອງພາກລັດ ແລະ ພາກສ່ວນທົ່ວໄປ ທີ່ໄດ້ຮັບອະນຸຍາດຈາກ ກະຊວງ ປທສ.
8. ຄຸ້ມຄອງ ແລະ ພັດທະນາ ບັນດາລະບົບເຕັກນິກ ແລະ ພື້ນຖານໂຄງລ່າງໃຫ້ບັນດາອົງການຈັດຕັ້ງພາກລັດ.
9. ຄຸ້ມຄອງ ແລະ ພັດທະນາ ລະບົບສູນໃບຮັບຮອງເອເລັກໂຕຣນິກ ແຫ່ງຊາດ (National Root Certification Authority, NRCA).
10. ສະເໜີປັບປຸງການຈັດຕັ້ງຂອງ ສອຊ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ.
11. ຈັດຕັ້ງປະຕິບັດລະບອບກວດກາ-ກວດການ ຂອງສູນໃຫ້ເປັນປົກກະຕິ.
12. ຂຶ້ນແຜນບຳລຸງ, ກໍ່ສ້າງ, ສັບຊ້ອນ, ຄຸ້ມຄອງ ແລະ ປະຕິບັດນະໂຍບາຍ ແລະ ວິໄນ ຕໍ່ພະນັກງານ ລັດຖະກອນ ພາຍໃນ ສອຊ.
13. ພົວພັນປະສານງານກັບອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດທາງດ້ານວິຊາການ, ຊອກແຫຼ່ງທຶນເພື່ອພັດທະນາວຽກງານ ສອຊ ຕາມການເຫັນດີຂອງຄະນະນຳ ກະຊວງ ປທສ.
14. ຈັດຕັ້ງປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

ມາດຕາ 4: ຂອບເຂດສິດ

1. ຈັດຕັ້ງປະຕິບັດທຸກຂໍ້ກຳນົດ, ມະຕິ, ຄຳສັ່ງ, ບົດແນະນຳ ຂອງພັກ-ລັດຖະບານ ແລະ ນິຕິກຳອື່ນ ເພື່ອຜັນຂະຫຍາຍແນວທາງນະໂຍບາຍຂອງ ກະຊວງ ປທສ ທີ່ພົວພັນເຖິງວຽກງານ ສອຊ ໃນຂອບເຂດຄວາມຮັບຜິດ ຊອບຂອງຕົນເພື່ອສ້າງເປັນແຜນການ, ໂຄງການລະອຽດ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດ, ຕິດຕາມກວດກາໃຫ້ໄດ້ຮັບໝາກຜົນ ແລະ ສະຫຼຸບຖອດຖອນບົດຮຽນ.
2. ປັບປຸງລະບຽບການພາຍໃນ ແລະ ນິຕິກຳທີ່ກ່ຽວຂ້ອງເພື່ອຄຸ້ມຄອງພະນັກງານ, ລະບົບເຕັກນິກ, ຊັບສິນ ສ່ວນ ລວມ ແລະ ສຳນັກງານໃຫ້ມີຄວາມປອດໄພ ແລະ ເປັນລະບຽບຮຽບຮ້ອຍ.
3. ສະເໜີແຜນການ, ແຜນງານ, ໂຄງການ, ແຜນງົບປະມານລາຍຮັບ-ລາຍຈ່າຍ ເພື່ອຮັບປະກັນໃຫ້ແກ່ວຽກງານລວມຂອງ ສອຊ.
4. ກວດກາຕິດຕາມ ການນຳໃຊ້ ເລກໝາຍອິນເຕີເນັດ, ລະຫັດ ຊື່ອິນເຕີເນັດ ຂອງຊາດ ແລະ ຂອງສາກົນ.

5. ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ນຳໃຊ້ລະຫັດຊື່ອິນເຕີເນັດສູງສຸດ ແຫ່ງຊາດ ດ໋ອດລາ (.LA).
6. ຄົ້ນຄວ້າ ແລະ ນຳສະເໜີຄວາມເໝາະສົມໃນການສະໜອງການຝາກອຸປະກອນໄອທີ ແລະ ຂໍ້ມູນຂ່າວສານ.
7. ເຈລະຈາ, ເຊັນສັນຍາ, ອານຸສັນຍາ ຫຼື ຂໍ້ຜູກພັນອື່ນໆ ກັບພາກສ່ວນຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການເຫັນດີຂອງຄະນະນຳກະຊວງ ປທສ.
8. ເຂົ້າຮ່ວມກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມ ທັງພາຍໃນ ແລະ ຕ່າງປະເທດ ຈັດຂຶ້ນ ຕາມການເຫັນດີຂອງຄະນະນຳ ກະຊວງ ປທສ.
9. ປັບປຸງການຈັດຕັ້ງຂອງ ສອຊ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ໃນແຕ່ລະໄລຍະ.
10. ກວດກາ-ກວດການ ການຈັດຕັ້ງວຽກງານຂອງ ສອຊ ເປັນປົກກະຕິ.
11. ສະເໜີແຕ່ງຕັ້ງ, ຍົກຍ້າຍ, ສັບຊ້ອນ, ເລື່ອນຊັ້ນ-ຂັ້ນ, ຍ້ອງຍໍ, ປະຕິບັດວິໄນ ແລະ ປະຕິບັດນະໂຍບາຍອື່ນໆ ຕໍ່ພະນັກງານລັດຖະກອນພາຍໃນ ສອຊ.
12. ປະສານງານກັບພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນ ແລະ ກ່ຽວກັບວຽກງານຂອງ ສອຊ.
13. ປະຕິບັດສິດອື່ນໆຕາມການມອບໝາຍຂອງຄະນະນຳ ກະຊວງ ປທສ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5: ໂຄງປະກອບກົງຈັກ**

ສູນອິນເຕີເນັດແຫ່ງຊາດປະກອບມີ 06 ພະແນກຄື:

1. ພະແນກ ບໍລິຫານ-ຈັດຕັ້ງ ແລະ ການເງິນ.
2. ພະແນກ ແຜນການ ແລະ ການຮ່ວມມື.
3. ພະແນກ ສ່ວນແບ່ງ ແລະ ມາດຕະຖານ.
4. ພະແນກ ສູນຂໍ້ມູນ ແຫ່ງຊາດ (NDC).
5. ພະແນກ ລະຫັດຊື່ອິນເຕີເນັດ ສູງສຸດ ແຫ່ງຊາດ ດ໋ອດລາ (.LA).
6. ພະແນກ ສູນກາງເຊື່ອມຕໍ່.

**ມາດຕາ 6: ໂຄງປະກອບບຸກຄະລາກອນ.**

1. ຫົວໜ້າສູນ 01 ທ່ານ, ເຊິ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງຈາກນາຍົກລັດຖະມົນຕີ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ ແລະ ການເຫັນດີເປັນເອກະພາບຈາກລັດຖະມົນຕີກະຊວງ ປທສ.
2. ຮອງຫົວໜ້າສູນ ຈຳນວນໜຶ່ງ, ເຊິ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຈາກລັດຖະມົນຕີກະຊວງ ປທສໂດຍໄດ້ຮັບການເຫັນດີຈາກຄະນະຈັດຕັ້ງສູນກາງພັກ.
3. ຫົວໜ້າ, ຮອງພະແນກ ແລະ ຫົວໜ້າໜ່ວຍງານ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະ ມົນຕີ ກະຊວງ ປທສ.
4. ພະນັກງານວິຊາການຈຳນວນໜຶ່ງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ.

**ມາດຕາ 7: ໜ້າທີ່ຂອງແຕ່ລະພະແນກ**

1. ພະແນກ ບໍລິຫານ-ຈັດຕັ້ງ ແລະ ການເງິນ

- ຄົ້ນຄວ້ານະໂຍບາຍພາຍໃນ, ສ້າງແຜນບໍາລຸງ, ກໍ່ສ້າງ, ຄຸ້ມຄອງນໍາໃຊ້, ສັບຊ້ອນ ແລະຍົກຍ້າຍບຸກຄະລາກອນ
- ພົວພັນໃດຍກົງ ທາງດ້ານວິຊາການກ່ຽວກັບວຽກງານປ້ອງກັນພັກ-ພະນັກງານ ຮ່ວມກັບ ພະແນກປ້ອງກັນພັກພະນັກງານຂອງ ກົມຈັດຕັ້ງ ກະຊວງ ປທສ.
- ເປັນໃຈກາງໃນການຄຸ້ມຄອງບໍລິຫານເອກະສານ, ບໍລິຫານຫ້ອງການ, ຄຸ້ມຄອງຊັບສິນຫ້ອງການ ແລະຊັບສິນອຸປະກອນເຕັກນິກ.
- ສະຫຼຸບສັງລວມວຽກງານການເຄື່ອນໄຫວ ປະຈໍາອາທິດ, ເດືອນ, ໄຕມາດ, 6 ເດືອນ ແລະ ປະຈໍາປີ.
- ຄົ້ນຄວ້າສະເໜີ ສ້າງລະບຽບການ ແລະ ນະໂຍບາຍກ່ຽວກັບງົບປະມານ ແລະ ການເງິນ, ການບັນຊີ, ກວດກາ ການເງິນ, ຄຸ້ມຄອງບັນຊີຊັບສິນ ແລະ ການຈັດຊື້ ຂອງ ສອຊ.
- ຂື້ນແຜນງົບປະມານ ລາຍຮັບ-ລາຍຈ່າຍ ປະຈໍາປີຂອງ ສອຊ.
- ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການປະຕິບັດ ລາຍຮັບວິຊາການ-ລາຍຈ່າຍງົບປະມານ ແລະ ບັນຊີຊັບສິນຂອງ ສອຊ.
- ຕິດຕາມ ບັນຊີລາຍຮັບ - ລາຍຈ່າຍຄັງເງິນສົດ.
- ຕິດຕາມ ບັນຊີໜີ້ຕ້ອງຮັບ - ໜີ້ຕ້ອງສົ່ງ ທັງພາຍໃນ ແລະ ຕ່າງປະເທດ, ຕິດຕາມບັນຊີການມອບພັນທະ.
- ສະຫຼຸບ ລາຍຮັບ-ລາຍຈ່າຍປະຈໍາເດືອນ, ງວດ, ປີ ກ່ຽວກັບສະພາບການດ້ານການເງິນຂອງ ສອຊ ເພື່ອລົມທຽບກັບກົມການເງິນຂອງ ກະຊວງ ປທສ.

2. **ພະແນກ ແຜນການ ແລະ ການຮ່ວມມື**
   - ເປັນໃຈກາງ ປະສານງານພົວພັນ-ຮ່ວມມື ແລະ ເຈລະຈາກັບບັນດາຄູ່ຮ່ວມມື ທັງພາຍໃນ ແລະຕ່າງປະເທດ ລວມທັງອົງການຈັດຕັ້ງສາກົນຕ່າງໆ.
   - ຮ່າງ ບົດບັນທຶກຊ່ວຍຈໍາ, ສັນຍາ, ອານຸສັນຍາ, ຂໍ້ຜູກພັນຕ່າງໆ ກັບພາຍໃນ ແລະ ຕ່າງປະເທດ.
   - ເກັບກໍາຂໍ້ມູນ ແລະ ສ້າງສະຖິຕິ ຂອງ ສອຊ.
   - ເປັນໃຈກາງ ປະສານງານ ກັບທຸກພະແນກ ເພື່ອສ້າງ ແລະ ເຜີຍແຜ່ ແຜນຍຸດທະສາດ, ແຜນການ, ໂຄງການແຜນປະຈໍາປີ, ແຜນປະຈໍາເດືອນ ແລະ ແຜນງານ ອັນລະອຽດຂອງ ສອຊ. ຕິດຕາມ, ກວດກາ ແລະ ລາຍງານ ຄວາມຄືບໜ້າ ແລະ ຂໍ້ຄົງຄ້າງ ໃນການຈັດຕັ້ງປະຕິບັດ ແຜນງານ ແລະ ໂຄງການ ໃຫ້ຄະນະຊຸມ ແລະ ກະຊວງ ປທສ ຮັບຊາບ ເປັນປົກກະຕິ.
   - ຄົ້ນຄວ້າ ແລະ ກວດກາບັນດານິຕິກໍາຕ່າງໆ ທີ່ຕິດພັນດ້ານການຮ່ວມມື ເພື່ອໃຫ້ຖືກຕ້ອງ ແລະສອດຄ່ອງຕາມແຕ່ລະໄລຍະ.

3. **ພະແນກ ສ່ວນແບ່ງ ແລະ ມາດຕະຖານ**
   - ໄລ່ລຽງຄ່າທາງຜ່ານ ສັນຍານໂທລະສັບ, ຂໍ້ຄວາມສັ້ນ (SMS), ໂທຂ້າມແດນອັດຕະໂນມັດ (Internatioal Roaming, IR) ທັງພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງຕາມສັນຍາ, ຂໍ້ຕົກລົງ ແລະ ລະບຽບການທີ່ກ່ຽວຂ້ອງ.
   - ໄລ່ລຽງຄ່າທາງຜ່ານ ສັນຍານອິນເຕີເນັດ ທັງພາຍໃນ, ຕ່າງປະເທດ ແລະ ຄ່າຕິດຕັ້ງຈຸດເຊື່ອມຕໍ່ (POP) ໃຫ້ຖືກຕ້ອງຕາມສັນຍາ, ຂໍ້ຕົກລົງ ແລະ ລະບຽບການທີ່ກ່ຽວຂ້ອງ.

- ພັດທະນາ ແລະ ປັບປຸງເຕັກນິກລະບົບໃບບິນ (Settlement System) ໃຫ້ສາມາດເຮັດວຽກ ແລະ ໃຫ້ສາມາດສົ່ງໃບຮຽກເກັບເງິນ (Statement/Invoice) ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ໄດ້ຢ່າງຖືກຕ້ອງ, ທັນເວລາເປັນປົກກະຕິ.
- ຄຸ້ມຄອງ, ກວດກາ, ສັງລວມ ຂໍ້ມູນທາງຜ່ານ ໂທລະສັບ ແລະ ອິນເຕີເນັດ, ຕິດຕາມເກັບກຳສະຖິຕິ ຜົນການສົມທຽບຂໍ້ມູນທາງຜ່ານທັງພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງ ແລະ ທັນເວລາ.
- ຄຸ້ມຄອງລະບົບການຈັດການຄວາມປອດໄພດ້ານຂໍ້ມູນຂ່າວສານ ຂອງ ສອຊ (ISMS/ISO27001).
- ຄຸ້ມຄອງລະບົບ ໄອທີ ແລະ ລະບົບ ເຄືອຂ່າຍພາຍໃນ ຂອງ ສອຊ.

4. **ພະແນກ ສູນຂໍ້ມູນແຫ່ງຊາດ (NDC).**

- ຄຸ້ມຄອງພື້ນຖານໂຄງລ່າງຂອງສູນຂໍ້ມູນ ແຫ່ງຊາດ (National Data Center) ເປັນຕົ້ນ ຫ້ອງເຄື່ອງ, ລະບົບໄຟຟ້າ, ລະບົບຄວາມເຢັນ, ລະບົບກວດກາ ອຸນະພູມ, ຄວາມຊຸ່ມ ແລະ ສະພາບແວດລ້ອມ, ລະບົບປ້ອງກັນຄວາມປອດໄພ (ລະບົບເຂົ້າອອກອາຄານ, ເຂົ້າອອກຫ້ອງເຄື່ອງ, ລະບົບກ້ອງວົງຈອນປິດ, ລະບົບກວດກາອັກຄີໄພ, ລະບົບດັບເພີງ).
- ສະໜອງພື້ນຖານໂຄງລ່າງສູນຂໍ້ມູນ ລະບົບບໍລິຫານລັດດ້ວຍເອເລັກໂຕຣນິກ ແລະ ລະບົບໄອຊີທີຂອງກະຊວງ ປທສ.
- ສົ່ງເສີມ, ພັດທະນາ ແລະ ສະໜອງການບໍລິການສູນຂໍ້ມູນ ແຫ່ງຊາດໃຫ້ແກ່ພາກລັດ ແລະ ສັງຄົມ.
- ສະໜອງການໃຫ້ບໍລິການຝາກ ແລະ ເຊົ່າ ພື້ນທີ່ຫ້ອງເຄື່ອງ, ອຸປະກອນ, ຝາກຂໍ້ມູນຂ່າວສານ ຄລາວຄອມພິວຕິງ (Cloud Computing) ໃຫ້ແກ່ພາກລັດ ແລະ ສັງຄົມ.
- ຄຸ້ມຄອງ ແລະ ພັດທະນາ ບັນດາລະບົບເຕັກນິກ ແລະ ພື້ນຖານໂຄງລ່າງໃຫ້ບັນດາອົງການຈັດຕັ້ງພາກລັດ.
- ສຳຫລວດ, ອອກແບບ ແລະ ຂື້ນແຜນ ການສ້າງສູນສຳຮອງ ສູນອິນເຕີເນັດ ແຫ່ງຊາດ ທີ່ພາກເໜືອ (ແຂວງ ຫລວງພະບາງ) ແລະ ພາກກາງ (ແຂວງ ສະຫວັນນະເຂດ)

5. **ພະແນກ ລະຫັດຊື່ອິນເຕີເນັດ ຊັ້ນສູງ ແຫ່ງຊາດ ດ໋ອດລາ (.LA).**

- ຄຸ້ມຄອງ, ບໍລິຫານ, ສົ່ງເສີມ, ພັດທະນາ ແລະ ນຳໃຊ້ຊັບພະຍາກອນລະຫັດຊື່ອິນເຕີເນັດ ແລະ ຊັບພະຍາກອນອິນເຕີເນັດອື່ນໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ.
- ຄຸ້ມຄອງ ແລະ ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດນຳໃຊ້ລະຫັດຊື່ອິນເຕີເນັດ ດ໋ອດລາ (.LA).
- ຄຸ້ມຄອງ ແລະ ອະນຸຍາດໃຫ້ນາຍທະບຽນບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ (Registrar).
- ຄຸ້ມຄອງລະບົບເຕັກນິກການຄຸ້ມຄອງແລະລະບົບຈົດທະບຽນລະຫັດຊື່ອິນເຕີເນັດ(Registry)ດ໋ອດລາ (.LA).
- ຄຸ້ມຄອງ ແລະ ພັດທະນາ ລະບົບສູນໃບຢັ້ງຢືນ... 

6. **ພະແນກ ສູນກາງເຊື່ອມຕໍ່.**

- ຄຸ້ມຄອງລະບົບ ສູນກາງໂທລະສັບ, ສູນກາງອິນເຕີເນັດ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຮັບປະກັນວຽກງານລວມສູນການສື່ສານ.
- ຄົ້ນຄວ້າພັດທະນາ ຂະຫຍາຍລະບົບສູນກາງໂທລະສັບ ແລະ ສູນກາງອິນເຕີເນັດ ເພື່ອຮັບປະກັນທາງດ້ານເຕັກນິກ ແລະ ບໍລິມາດການເຊື່ອມຕໍ່ ທັງພາຍໃນ ແລະ ຕ່າງປະເທດ.

- ສະໜອງການເຊື່ອມຕໍ່ກັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ທັງພາຍໃນ ແລະ ຕ່າງປະເທດ ແລະ ອົງການ ປກຊ-ປກສ.
- ພົວພັນປະສານງານດ້ານເຕັກນິກການເຊື່ອມຕໍ່ ສັນຍານໂທລະສັບ ແລະ ອິນເຕີເນັດ ພາຍໃນ ແລະ ຕ່າງປະເທດ.
- ຄຸ້ມຄອງ ລະບົບ ແລະ ອຸປະກອນ ວິທະຍຸຄື້ນສັ້ນ (ໂຟນນີ້) ຂອງ ກະຊວງ ປທສ.
- ປະຈຳການເຕັກນິກ ເພື່ອເຝົ້າລະວັງລະບົບເຕັກນິກຂອງ ສອຊ ທັງໝົດ ເພື່ອຮັບປະກັນການເຮັດວຽກຢ່າງເປັນປົກກະຕິ ຕະຫຼອດ 24x7.
- ຮັບແຈ້ງ, ແຈ້ງເຕືອນ ແລະ ພົວພັນປະສານງານກັບພາກສ່ວນທີ່ກ່ຽວຂ້ອງເພື່ອແກ້ໄຂບັນຫາທີ່ເກີດຂຶ້ນກັບລະບົບເຕັກນິກໃຫ້ທັນການ.
- ບັນທຶກ, ເກັບກຳ ແລະ ລາຍງານ ສະພາບລະບົບເຕັກນິກເພື່ອລາຍງານໃຫ້ຂັ້ນເທິງເປັນປົກກະຕິ.

## ໝວດທີ 4
## ລະບອບແຜນວິທີເຮັດວຽກ

**ມາດຕາ 8: ແບບແຜນວິທີເຮັດວຽກ**

ສູນອິນເຕີເນັດ ແຫ່ງຊາດ ເຄື່ອນໄຫວ ແລະ ດຳເນີນງານຕາມຫຼັກການລວມດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງຄວາມຮັບຜິດຊອບ ຢ່າງຈະແຈ້ງ.
2. ເຮັດວຽກມີແຜນການ, ຕິດຕາມ, ກວດກາ, ສະຫຼຸບ, ຖອດຖອນບົດຮຽນ, ປະຕິບັດລະບອບສ່ອງແສງລາຍງານ ເປັນປົກກະຕິ.
3. ພົວພັນປະສານງານດ້ານວິຊາສະເພາະ ກັບບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ຂອງພັກ-ລັດ ແລະ ອົງການຈັດຕັ້ງມະຫາຊົນ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9: ກາປະທັບ ແລະ ງົບປະມານ**

ສູນອິນເຕີເນັດ ແຫ່ງຊາດ ມີກາປະທັບ ແລະ ງົບປະມານຂອງຕົນ ເພື່ອນຳໃຊ້ໃນການເຄື່ອນໄຫວວຽກງານ.

**ມາດຕາ 10: ການຈັດຕັ້ງປະຕິບັດ**

ບັນດາການຈັດຕັ້ງ ທີ່ຂຶ້ນກັບກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 11: ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງສະບັບເລກທີ 2946/ປທສ, ລົງວັນທີ 11 ທັນວາ 2014.

ລັດຖະມົນຕີ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ



ດຣ. ທັນສະໄໝ ກົມມະສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ
ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 2165

ນະຄອນຫຼວງວຽງຈັນ, ວັນທີ 15 JUL 2016

# ໂຄງຮ່າງການຈັດຕັ້ງ ຂອງ ສູນອິນເຕີເນັດ ແຫ່ງຊາດ

